ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

.............

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 0233/ກປ.04

ນະຄອນຫລວງ ວຽງຈັນ, ວັນທີ 02 SEP 2004

# ຂໍ້ຕົກລົງ

## ຂອງ ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້
## ວ່າດ້ວຍ ຜະລິດຕະພັນ ຫວາຍ, ໄມ້ປ່ອງ ແລະ ໄມ້ເກດສະໜາ

- ອີງຕາມ ມາດຕາ 60 ຂອງກົດໝາຍປ່າໄມ້ ສະບັບເລກທີ 01-96, ລົງວັນທີ 11/10/1996 ກ່ຽວກັບ ສິດ ແລະ ໜ້າທີ່ ຂອງ ກະຊວງ ກະສິກຳ ແລະ ປ່າໄມ້.
- ອີງຕາມ ລະບຽບການ ຂອງ ກະຊວງ ກະສິກຳແລະປ່າໄມ້ ສະບັບເລກທີ 0261/ກປ.2000, ລົງວັນທີ 30/11/2000 ວ່າດ້ວຍ ການຄຸ້ມຄອງ ໂຮງງານ ປຸງແຕ່ງໄມ້ ແລະ ຜະລິດຕະພົນປ່າໄມ້.

### ລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ :

**ມາດຕາ 1. ຈຸດປະສົງ.**

- ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ເຮັດໃຫ້ການນຳໃຊ້ ຫວາຍ, ໄມ້ປ່ອງ ແລະ ໄມ້ເກດສະໜາ ທີ່ມີຢູ່ ໃນປ່າທຳມະຊາດ ໄດ້ຮັບການຄຸ້ມຄອງ ແລະ ນຳໃຊ້ ແບບຍືນນານ ແລະ ເກີດຜົນປະໂຫຍດສູງສຸດ ດ້ວຍການສ້າງມູນຄ່າເພີ້ມ ຈາກ ການປຸງແຕ່ງ ໃຫ້ເປັນ ຜະລິດຕະພັນ ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ.
- ແນໃສ່ ຊຸກຍູ້, ສົ່ງເສີມ ແລະ ຄຸ້ມຄອງ ການປຸງແຕ່ງ ຫວາຍ, ໄມ້ປ່ອງ ແລະ ໄມ້ເກດສະໜາ ເປັນຜະລິດຕະພັນ ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ເພື່ອຮັບໃຊ້ ພາຍໃນ ແລະ ສົ່ງອອກຕ່າງປະເທດ.
- ແນໃສ່ ສ້າງຄວາມເປັນເອກະພາບ ລະຫວ່າງ ຂະແໜງການ ກ່ຽວຂ້ອງຕ່າງໆ ແລະ ຜູ້ດຳເນີນທຸລະກິດ ກ່ຽວກັບນິຍາມ ແລະ ຂະບວນການປຸງແຕ່ງ ຫວາຍ, ໄມ້ປ່ອງ ແລະ ໄມ້ເກດສະໜາ.

**ມາດຕາ 2. ນິຍາມ ຄຳສັບ**

ຜະລິດຕະພັນ ແມ່ນຜົນຜະລິດ ທີ່ໄດ້ມາຈາກ ການນຳເອົາວັດຖຸດິບ ໄປຜ່ານຂະບວນການປຸງແຕ່ງຕ່າງໆ ເພື່ອໃຫ້ ກາຍເປັນ ຜະລິດຕະພັນເບື້ອງຕົ້ນ, ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ.

ມາດຕາ 3. **ຂະບວນການປຸງແຕ່ງ ຜະລິດຕະພັນຫວາຍ.**

**ຜະລິດຕະພັນຫວາຍແມ່ນ ຜົນຜະລິດທີ່ໄດ້ມາຈາກ ການນຳເອົາຫວາຍ ໄປຜ່ານການປຸງແຕ່ງຕ່າງໆ ໃຫ້ກາຍເປັນເຄື່ອງໃຊ້ ຕາມຈຸດປະສົງ.**

3.1 ຂັ້ນຕອນການປຸງແຕ່ງ ເບື້ອງຕົ້ນ.

1. ອະນາໄມ.
2. ຄັດເລືອກຄຸນນະພາບ ແລະ ແຍກຂະໜາດ.
3. ຕົ້ມປະສົມ ນ້ຳມັນ ກາຊວນ ເພື່ອເຮັດໃຫ້ໄດ້ ຄວາມໜຽວ, ອົບ, ຕາກແຫ້ງ ແລະ ເກັບມ້ຽນ.

3.2 ຂັ້ນຕອນການປຸງແຕ່ງ ເປັນຜະລິດຕະພັນ ເຄິ່ງສຳເລັດຮູບ : ນຳເອົາຫວາຍ ປຸງແຕ່ງເບື້ອງຕົ້ນ ໄປສືບຕໍ່ ປຸງແຕ່ງ ໂດຍຜ່ານ ຂອດການຜະລິດ ຕື່ມອີກ ຄື :

1. ຂູດ ແລະ ເຫຼົາ.
2. ຕັດແຕ່ງເປັນສິ້ນສ່ວນຕ່າງໆ ຕາມ ຂະໜາດ ທີ່ຕ້ອງການ.
3. ຊີຮູ, ຂີດ, ບິດ ແລະ ອື່ນໆ ຕາມ ແບບຜະລິດຕະພັນ ທີ່ກຳນົດໄວ້.

3.3 ຂັ້ນຕອນການປຸງແຕ່ງ ເປັນຜະລິດຕະພັນ ສຳເລັດຮູບ : ນຳເອົາ ຜະລິດຕະພັນຫວາຍ ເຄິ່ງສຳເລັດຮູບ ໄປສືບຕໍ່ ປຸງແຕ່ງ ໃຫ້ກາຍເປັນຜະລິດຕະພັນສຳເລັດຮູບ ຄື :

1. ມັດ, ຄຽນ, ສານ ແລະ ຕົບແຕ່ງ ເປັນລວດລາຍ ຕາມແບບຊະນິດ ຜະລິດຕະພັນ ທີ່ຕ້ອງການ.
2. ເປົ່າຂົນ, ຂັດດິນສໍຟອງ, ຂັດກະດາດຊາຍ ແລະ ອື່ນໆ.
3. ຟອກສີ, ທາສີ, ອົບສີ, ຂັດເງົາ ແລະ ລົງສະແລັກ.

ມາດຕາ 4. **ຂະບວນການ ປຸງແຕ່ງ ຜະລິດຕະພັນ ໄມ້ປ່ອງ.**

**ຜະລິດຕະພັນໄມ້ປ່ອງແມ່ນ ຜົນຜະລິດ ທີ່ໄດ້ມາຈາກ ການນຳເອົາໄມ້ປ່ອງ ໄປຜ່ານການປຸງແຕ່ງຕ່າງໆ ໃຫ້ກາຍເປັນເຄື່ອງໃຊ້ ຕາມຈຸດປະສົງ.**

4.1 ຂັ້ນຕອນການປຸງແຕ່ງ ຜະລິດຕະພັນ ໄມ້ປ່ອງເຄິ່ງສຳເລັດຮູບ

1. ແຊ່ນ້ຳ
2. ຕັດແຕ່ງ ໃຫ້ໄດ້ ຕາມຂະໜາດ
3. ຈັກ,ເຫຼົາ

4.2 ຂັ້ນຕອນການປຸງແຕ່ງ ຜະລິດຕະພັນ ໄມ້ປ່ອງສຳເລັດຮູບ

1. ສານ, ມັດ, ຄຽນ
2. ຂັດ, ທາສີ ຫຼື ລົງສະແລັກ ແລະ ອື່ນໆ.

ສຳລັບ ຜະລິດຕະພັນໄມ້ປ່ອງ ສຳເລັດຮູບ ທີ່ຜະລິດດ້ວຍເຄື່ອງຈັກ ຈາກໂຮງງານປຸງແຕ່ງໄມ້ປ່ອງ, ຂະບວນ ການປຸງແຕ່ງ ກໍເຊັ່ນດຽວກັນກັບ ຂະບວນ ການປຸງແຕ່ງ ຜະລິດຕະພັນໄມ້ປ່ອງ ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ. ບາງຜະລິດຕະພັນ ໄມ້ປ່ອງສຳເລັດຮູບ

ຈະຕ້ອງໄດ້ຜ່ານການບົດ, ຕົ້ມ, ຜ່ານຂະບວນການທາງດ້ານເຄມີ, ອົບໃຫ້ແຫ້ງ ແລະ ຕັດແຕ່ງ ເຊັ່ນ: ການຜະລິດ ຝຸ່ນເຈ້ຍ ແລະ ເຈ້ຍສຳເລັດຮູບ.

**ມາດຕາ 5. ຂະບວນການ ປຸງແຕ່ງ ໄມ້ເກດສະໜາ.**

**5.1 ຂະບວນການກັ່ນ ນ້ຳມັນໄມ້ເກດສະໜາ**

ນ້ຳມັນໄມ້ເກດສະໜາ ແມ່ນຜະລິດຕະພັນສຳເລັດຮູບ ທີ່ໄດ້ມາຈາກ ການນຳເອົາ ໄມ້ເກດສະໜາ ໄປຜ່ານການປຸງແຕ່ງດັ່ງລຸ່ມນີ້:

1. ອະນາໄມ
2. ແຍກຄຸນນະພາບ
3. ບົດໃຫ້ລະອຽດ
4. ນຳເອົາໄມ້ເກດສະໜາ ທີ່ບົດແລ້ວໄປໝັກ
5. ຕົ້ມເພື່ອສະກັດເອົານ້ຳມັນ
6. ປຸງແຕ່ງສີ ຕາມຄວາມຕ້ອງການຂອງຕະຫຼາດ

**5.2 ຂະບວນການປຸງແຕ່ງ ຜະລິດຕະພັນ ໄມ້ເກດສະໜາ ເຄິ່ງສຳເລັດຮູບ**

ສຳລັບຝຸ່ນໄມ້ເກດສະໜາ ທີ່ໄດ້ຜ່ານການສະກັດ ເອົານ້ຳມັນແລ້ວ ແມ່ນຜະລິດ ຕະພັນ ໄມ້ເກດສະໜາເຄິ່ງສຳເລັດຮູບ ທີ່ຈະຕ້ອງ ນຳໄປ ຕາກໃຫ້ແຫ້ງ ເພື່ອຜະລິດເປັນ ຜະລິດຕະພັນສຳເລັດຮູບ ເຊັ່ນ: ທູບຫອມ ແລະ ຜະລິດຕະພັນສຳເລັດຮູບອື່ນໆ.

**ມາດຕາ 6. ນະໂຍບາຍ ສົ່ງເສີມ ການສົ່ງອອກ.**

- ລັດມີນະໂຍບາຍ ສົ່ງເສີມ ໃຫ້ຜູ້ທີ່ໄດ້ຮັບ ອະນຸຍາດ ດຳເນີນ ທຸລະກິດ ກ່ຽວກັບ ຫວາຍ, ໄມ້ປ່ອງ ແລະ ໄມ້ເກດສະໜາ ສາມາດສົ່ງຜະລິດຕະພັນ ເຄິ່ງສຳເລັດຮູບ ແລະ ສຳເລັດຮູບ ສົ່ງອອກ ຕ່າງປະເທດ.

**ມາດຕາ 7. ນະໂຍບາຍ ສົ່ງເສີມ ການປູກ ແລະ ຂະຫຍາຍພັນ.**

ລັດມີນະໂຍບາຍ ສົ່ງເສີມ ໃຫ້ບຸກຄົນ, ການຈັດຕັ້ງ ແລະ ຫົວໜ່ວຍເສດຖະກິດ ລົງທຶນ ໃນການປູກ ແລະ ຂະຫຍາຍພັນ ຫວາຍ, ໄມ້ປ່ອງ, ໄມ້ເກດສະໜາ ແລະ ເຄື່ອງປ່າຂອງດົງ ຊະນິດຕ່າງໆ ທັງນີ້ ກໍເພື່ອເປັນການຫຼຸດຜ່ອນການນຳໃຊ້ເຄື່ອງປ່າຂອງດົງຈາກປ່າທຳມະຊາດ ແລະ ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ຂອງສັງຄົມ ໄດ້ຢ່າງຍືນນານ ດ້ວຍຮູບ ການຕ່າງໆ ເຊັ່ນ:.

- ຍົກເວັ້ນ ພາສີທີ່ດິນ ທີ່ນຳໃຊ້ ເຂົ້າໃນ ການປູກຫວາຍ, ໄມ້ປ່ອງ, ໄມ້ເກດສະໜາ ແລະ ເຄື່ອງປ່າຂອງດົງ ຊະນິດຕ່າງໆ ຕາມ ມາດຕາ 34 ຂອງ ກົດໝາຍ ປ່າໄມ້.
- ທົດແທນ ຄ່າເສຍຫາຍ ແກ່ເຈົ້າຂອງ ຜູ້ປູກຫວາຍ, ໄມ້ປ່ອງ, ໄມ້ເກດສະໜາ ແລະ ເຄື່ອງ ປ່າຂອງດົງ ຊະນິດຕ່າງໆ ທີ່ມີການເວນຄືນ ທີ່ດິນ ເພື່ອຮັບໃຊ້ ສາທາລະນະປະໂຫຍດ.
- ອຳນວຍ ຄວາມສະດວກ ໃຫ້ແກ່ ຜູ້ຂໍລົງທຶນ ປູກຫວາຍ, ໄມ້ປ່ອງ, ໄມ້ເກດສະໜາ ແລະ ເຄື່ອງປ່າຂອງດົງ ຊະນິດຕ່າງໆ ເພື່ອເປັນສິນຄ້າ ອອກຕ່າງປະເທດ.

- ຍົກເວັ້ນ ຄ່າບູລະນະ ປ່າໄມ້, ຄ່າຊັບພະຍາກອນ ປ່າໄມ້ ແລະ ຄ່າພັນທະຕ່າງໆ ໃນກໍລະນີທີ່ມີການຕັດຫວາຍ, ໄມ້ປ່ອງ, ໄມ້ເກດສະໜາ ແລະ ເຄື່ອງປ່າຂອງດົງ ຊະນິດຕ່າງໆ ເພື່ອໃຊ້ສອຍ ໃນ ຄອບຄົວ ແລະ ສາທາລະນະ ປະໂຫຍດ. ສຳລັບ ການຕັດຫວາຍ, ໄມ້ປ່ອງ, ໄມ້ເກດສະໜາ ແລະ ເຄື່ອງປ່າຂອງດົງ ຊະນິດຕ່າງໆ ຈາກ ສວນປູກ ເພື່ອເປັນສິນຄ້າພາຍໃນ ແລະ ສົ່ງອອກ ຕ່າງປະເທດນັ້ນ ແມ່ນໃຫ້ ເສຍອາກອນ ລາຍໄດ້, ແຕ່ໃຫ້ຍົກເວັ້ນ ຄ່າບູລະນະ ປ່າໄມ້ ແລະ ຄ່າຊັບພະຍາກອນ ປ່າໄມ້.
- ໃຫ້ຄຳແນະນຳ ທາງດ້ານ ເຕັກນິກ - ວິຊາການ ໃນ ການເກັບແກ່ນ, ການກ້າເບ້ຍ, ການປູກ ແລະ ການບົວລະບັດ.

**ມາດຕາ 8. ການຈັດຕັ້ງປະຕິບັດ.**

ມອບໃຫ້ ກົມປ່າໄມ້, ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດພິເສດ ສົມທົບ ກັບ ພາກສ່ວນ ກ່ຽວຂ້ອງ ແລະ ອຳນາດ ການປົກຄອງ ທ້ອງຖິ່ນ ຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້ ໃຫ້ໄດ້ຮັບຜົນ ເປັນຢ່າງດີ.

**ມາດຕາ 9. ຜົນສັກສິດ.**

ຂໍ້ຕົກລົງ ສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ຟ, ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

ດຣ. ຕີ ພົມມະສັກ